ລາຍງານກ່ຽວກັບການບໍລິຫານຈັດການນ້ຳ ຂອງເຂື່ອນໄຟຟ້ານ້ຳງື່ມ1



ອີງຕາມການແຈ້ງການຂອງ ກົມອຸຕຸນິຍົມ ແລະ ອຸທົກກະສາດ ໄດ້ແຈ້ງເຕືອນໄພໃຫ້ຊາບວ່າ ພາຍຸໝູນເຂດຮ້ອນ ແມດໂມ (Matmo) ຫົວທີ 21 ປະຈຳປີ 2025 ກຳລັງມາ!

ເສັ້ນທາງພາຍຸ: ຄາດວ່າຈະຂຶ້ນແຄມຝັ່ງ ສສ ຫວຽດນາມ ລະຫວ່າງ ວັນທີ 5-6 ຕຸລາ 2025 ແລະ ຈະອ່ອນກຳລັງກາຍເປັນຄວາມກົດດັນ ອາກາດຕ່ຳທີ່ມີກຳລັງແຮງປົກຄຸມຢູ່ ພາກເໜືອຂອງປະເທດລາວ.

ຜົນກະທົບ: ລະຫວ່າງວັນທີ 03 ຫາ 07 ຕຸລາ 2025, ຈະມີຝົນຕົກໜັກ ຫາ ໜັກຫຼາຍ ພ້ອມລົມພັດແຮງຢູ່ບາງທ້ອງຖິ່ນທົ່ວທຸກພາກ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ວັນທີ 3 ຕຸລາ 2025, ຂໍແຈ້ງໃຫ້ຊາບກ່ຽວກັບການບໍລິຫານຈັດການນ້ຳ ແມ່ນໄດ້ເພີ່ມ ການລະບາຍນ້ຳ ເພື່ອຮັກສາຄວາມປອດໄພ ໃຫ້ກັບທຸກພາກສ່ວນ ຕາມ ຂັ້ນຕອນທາງດ້ານເຕັກນິກວິຊາການ ເນື່ອງຈາກລະດັບນ້ຳໃນອ່າງເກັບ ນ້ຳເຂື່ອນນ້ຳງື່ມ 1 ໄດ້ເພີ່ມຂຶ້ນ!

· ປະລິມານນ້ຳທີ່ລະບາຍເພີ່ມ: ປະລິມານນ້ຳທີ່ໄດ້ໄຫຼອອກຈາກເຂື່ອນ ໄຟຟ້ານ້ຳງື່ມ 1 ລວມທັງໝົດຈະເພີ່ມຂຶ້ນ 953 m3/s .

ການເພີ່ມການລະບາຍນ້ຳ, ປະລິມານນ້ຳຈະເຮັດໃຫ້ຫຼາຍພື້ນທີ່ລຸ່ມ ຂອງເຂື່ອນມີຄວາມສ່ຽງນ້ຳຮອດຈຸດຖ້ວມເຊັ່ນ:

· ຈຸດວັດແທກບ້ານຈຸ້ມ: ໃກ້ເຖິງຈຸດເຕືອນໄພທີ່ສຸດ, ເຫຼືອພຽງ 0.10 ແມັດ.

· ຈຸດວັດແທກທ່າລາດ: ຍັງເຫຼືອ 1.30 ແມັດ ເຖິງຈຸດນ້ຳຖ້ວມ (13.60 ແມັດ).

· ຈຸດວັດແທກບ້ານປາກກະຍຸງ: ຍັງເຫຼືອ 1.72 ແມັດ ເຖິງຈຸດນ້ຳ ຖ້ວມ (12 ແມັດ).

ສະພາບການໃນປັດຈຸບັນແມ່ນມີຄວາມສ່ຽງສູງທີ່ຈາກການ ລະບາຍນ້ຳຂອງເຂື່ອນ ແລະ ອິດທິພົນຂອງພາຍຸ Matmo ທີ່ຈະ ເຮັດໃຫ້ເກີດ ນ້ຳປ່າໄຫຼຊຸແຮງ, ດິນເຈື່ອນ, ແລະ ນ້ຳຖ້ວມຍັ່ງ. ສະນັ້ນຈຶ່ງຮຽກຮ້ອງໃຫ້:

1. ປະຊາຊົນລຽບຕາມແມ່ນ້ຳງື່ມ: ຕ້ອງມີສະຕິ ແລະ ຍົກຍ້າຍ ສິ່ງຂອງຂຶ້ນສູ່ບ່ອນສູງ.
2. ປະຊາຊົນທົ່ວປະເທດ: ຂໍໃຫ້ຕິດຕາມຂ່າວພະຍາກອນອາກາດ ຈາກກົມອຸຕຸນິຍົມ ແລະ ອຸທົກກະສາດຢ່າງຕໍ່ເນື່ອງ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ